# ກິດຈະກຳການສາທິດ ເຕັກນິກທາງເລືອກ ທເໝາະສມ



ນຳສະເໜີ ໂດຍ: ພູຄຳ ວຽງວິໄລ

ສູນຄົ້ນຄວ້າການລ້ຽງສັດ
ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ ແຫ່ງຊາດ

# ສະພາບລວມ

- ການຈັດຕັ້ງປະຕິບັດກິດຈະກຳ ການສາທິດເຕັກນິກທາງເລືອກທີ່ເໝາະສົມ ແມ່ນໄດ້ຈັດຕັ້ງປະຕິບັດຢູ່ໃນຄອບຄົວຂອງຊາວກະສິກອນ ຜູ້ທີ່ມີຄວາມສະໝັກໃຈເຮັດກິດຈະກຳຮ່ວມກັບໂຄງການ.
- ຄອບຄົວທີ່ເຂົ້າຮ່ວມເຮັດກິດຈະກຳ ທັງໝົດ 154 ຄອບຄົວ, ຢູ່ໃນ 4 ບ້ານ ຂອງເມືອງເຊບັ້ງໄຟ, ແຂວງຄຳມ່ວນ, 5 ບ້ານ ຂອງເມືອງໄຊບູລີ, ແຂວງສະຫວັນນະເຂດ ແລະ 1 ບ້ານ ຂອງເມືອງຊະນະສົມບູນ, ແຂວງຈຳປາສັກ.
- ກິດຈະກຳການສາທິດເຕັກນິກທາງເລືອກທີ່ເໝາະສົມ ແມ່ນໄດ້ຖືກຄັດເລືອກໂດຍຊາວກະສິກອນ ມີທັງໝົດ 17 ເຕັກນິກ. ໃນນັ້ນ, ໃນດ້ານການປູກພືດ ມີ 10 ເຕັກນິກ ແລະ ດ້ານການລ້ຽງສັດ ມີ 7 ເຕັກນິກ.

## ✍ດ້ານການປູກພືດ:

1. ການປູກເຂົ້າທົນນ້ຳຖ້ວມ.
2. ການປູກເຂົ້າດໍ.
3. ການເຮັດນາຫວ່ານ.
4. ການເຮັດນາສັກ.
5. ການປູກຖົ່ວຂຽວປັບປຸງດິນ.
6. ການປູກຜັກລະດູຝົນ.
7. ການປູກສາລີຫວານ.
8. ການປູກຖົ່ວຜັກຍາວ.
9. ການນຳໃຊ້ຝຸ່ນອົງຄະທາດ.

## ✍ດ້ານການລ້ຽງສັດ:

1. ການລ້ຽງໄກ່.
2. ການລ້ຽງເປັດ.
3. ການລ້ຽງເປັດໃນນາເຂົ້າ.
4. ການລ້ຽງແບ້.
5. ການລ້ຽງປາໃສ່ໜອງ.
6. ການລ້ຽງປາໃນນາເຂົ້າ.
7. ການສັກຢາກັນພະຍາດສັດ.

# ຈຸດປະສົງ:

- ເພື່ອສົ່ງເສີມເຕັກນິກການປູກພືດ ແລະ ລ້ຽງສັດ ໃຫ້ເປັນອີກທາງເລືອກນຶ່ງໃນການປັບຕົວຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ. ນອກຈາກນັ້ນ, ກໍຍັງສາມາດປັບປຸງການຄ້ຳປະກັນສະບຽງອາຫານ ແລະ ສ້າງລາຍຮັບ ໃຫ້ແກ່ຄອບຄົວຊາວກະສິກອນ ໃນເຂດທີ່ມັກເກີດໄພພິບັດ.

# ເປົ້າໝາຍ:

- ປະເມີນຄວາມເໝາະສົມຂອງແນວພັນພືດ, ແນວພັນສັດ ທີ່ນຳມາເຮັດການສາທິດ ວ່າມີຄວາມແທດເໝາະກັບສະພາບຂອງທ້ອງຖິ່ນຫຼືບໍ່ ໂດຍສະເພາະໃນສະພາບແວດລ້ອມທີ່ມີຄວາມສ່ຽງທາງໄພພິບັດ ແລະ ມີເນື້ອທີ່ຈຳກັດ.

- ປະເມີນຜົນທາງດ້ານເສດຖະກິດ ຂອງການເຮັດສາທິດໃນແຕ່ລະກິດຈະກຳ, ຜົນຂອງການເຮັດກິດຈະກຳທາງເລືອກທີ່ເໝາະສົມນັ້ນ ສາມາດເພີ່ມແຫຼ່ງອາຫານໃນຄອບຄົວ ແລະ ຊ່ວຍປັບປຸງຊີວິດການເປັນຢູ່ຂອງຄອບຄົວຊາວກະສິກອນ ໃຫ້ດີຂຶ້ນຫຼືບໍ່?

- ຕີລາຄາທັດສະນະຂອງຊາວກະສິກອນ ກ່ຽວກັບຜົນກະທົບ ທີ່ອາດມີຄວາມສ່ຽງອັນຕະລາຍເກີດຂຶ້ນໄດ້ ຕໍ່ກັບການປູກພືດ ແລະ ການລ້ຽງສັດ ທີ່ເຄີຍຈັດຕັ້ງປະຕິບັດຜ່ານມາ ສົມທຽບກັບ ວິທີການແບບໃໝ່ ຕາມການແນະນຳຂອງວິຊາການ.

# ຂັ້ນຕອນ ແລະ ວິທີການຈັດຕັ້ງ ປະຕິບັດ

1. ການຄັດເລືອກບ້ານເປົ້າໝາຍ.
2. ການເຜີຍແຜ່ນະໂຍບາຍ ແລະ ຄັດເລືອກຄອບຄົວຊາວກະສິກອນ ເຂົ້າຮ່ວມກິດຈະກໍາ.
3. ການຝຶກອົບຮົມທາງດ້ານເຕັກນິກວິຊາການໃຫ້ແກ່ຊາວກະສິກອນ ທີ່ເຮັດສາທິດເຕັກນິກທາງເລືອກທີ່ເໝາະສົມ.
4. ການກະກຽມ ແລະ ການສະໜອງວັດຖຸນໍາເຂົ້າກະສິກໍາທີ່ຈໍາເປັນ.
5. ການຕິດຕາມ ໃຫ້ຄໍາແນະນໍາ ທາງດ້ານວິຊາການ ກ່ຽວກັບ ວິທີການຈັດຕັ້ງປະຕິບັດກິດຈະກໍາສາທິດ.
6. ການສະຫຼຸບ ຕີລາຄາ ຖອດຖອນບົດຮຽນ ແລະ ປະເມີນຜົນກິດຈະກໍາ ຮ່ວມກັບຊາວກະສິກອນ.

# ຂັ້ນຕອນທີ 1: ການຄັດເລືອກບ້ານເປົ້າໝາຍ

- ສົມທົບກັບພະແນກ ກປ ແຂວງ, ຫ້ອງການ ກປ ເມືອງ ຄັດເລືອກ ແລະ ກໍານົດບ້ານເປົ້າໝາຍຂອງໂຄງການ ໂດຍອີງໃສ່ເງື່ອນໄຂ ດັ່ງລຸ່ມນີ້:
  - ✍ ເປັນບ້ານທີ່ມີການຜະລິດກະສິກໍາ.
  - ✍ ເປັນບ້ານທີ່ມີຄວາມສ່ຽງທາງດ້ານໄພພິບັດ (ມັກເກີດມີໄພນ້ຳຖ້ວມ ຫຼື ແຫ້ງແລ້ງ ໃນແຕ່ລະປີ)
  - ✍ ການຈັດຕັ້ງບ້ານ ແລະ ຊາວກະສິກອນ ໃຫ້ຄວາມຮ່ວມມືດີ.
  - ✍ ມີເສັ້ນທາງຄົມມະນາຄົມ ສາມາດເຂົ້າເຖິງໄດ້ຕະຫຼອດປີ.
  - ✍ແລະ ອື່ນໆ.

# ຂັ້ນຕອນທີ 2: ການຄັດເລືອກຄອບຄົວເຂົ້າຮ່ວມເຮັດກິດຈະກໍາ

- ✍ ສະເໜີສະພາບລວມ ແລະ ຈຸດປະສົງຂອງໂຄງການ ໃຫ້ຊາວກະສິກອນຜູ້ເຂົ້າຮ່ວມໄດ້ຮັບຮູ້.
- ✍ ສົນທະນາ ກ່ຽວກັບ ປະຫວັດຂອງໄພທໍາມະຊາດ ທີ່ເກີດຂຶ້ນໃນບ້ານ ແລະ ຜົນກະທົບຕໍ່ຊີວິດການເປັນຢູ່ຂອງຊາວບ້ານ.
- ✍ ແລກປ່ຽນປະສົບການ ກ່ຽວກັບ ຄວາມຮູ້ພື້ນຖານ ໃນການພະຍາກອນ, ລະບົບການເຕືອນໄພ ແລະ ການກະກຽມຮັບມືຂອງຊາວບ້ານ ຕໍ່ກັບສະພາບໄພນໍ້າຖ້ວມ ແລະ ແຫ້ງແລ້ງ ຮ່ວມກັບຊາວບ້ານ.
- ✍ ສົນທະນາ ກ່ຽວກັບ ວິທີການຜະລິດກະສິກໍາ ທີ່ໄດ້ຈັດຕັ້ງປະຕິບັດໃນຜ່ານມາ ເຫັນວ່າມີຄວາມເໝາະສົມ ແລະ ສາມາດ



- ✍ ສະເໜີເງື່ອນໄຂ ຜູ້ສະໝັກໃຈເຂົ້າຮ່ວມ ເຮັດການສາທິດ ທົດສອບ ວິທີການຜະລິດກະສິກໍາ ທີ່ເໝາະສົມ ເພື່ອຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ແລະ ນະໂຍບາຍຂອງໂຄງການ.

# ການຄັດເລືອກຄອບຄົວເປົ້າໝາຍ ແລະ ການກຳນົດກິດຈະກຳ

- ✍ເປັນຄອບຄົວ ທີ່ມີຄວາມສົນໃຈຢາກເຮັດທົດສອບ ກິດຈະກຳທາງເລືອກ ເພື່ອຫຼຸດຜ່ອນຄວາມສ່ຽງທາງດ້ານໄພພິບັດ.
- ✍ມີແຮງງານໃນການຈັດຕັ້ງປະຕິບັດກິດຈະກຳການສາທິດທົດສອບ.
- ✍ສາມາດປະຕິບັດຕາມການແນະນຳຂອງວິຊາການ ຫຼື ສາມາດເຂົ້າຮ່ວມຝຶກອົບຮົມ, ທັດສະນະສຶກສາ, ແລກປ່ຽນບົດຮຽນຕ່າງໆ ກ່ຽວກັບ ການເຮັດກິດຈະກຳ ທີ່ຈັດຂຶ້ນຢູ່ພາຍໃນບ້ານ, ເມືອງ, ແຂວງ ແລະ ບ່ອນອື່ນໆ.
- ✍ເປັນຄອບຄົວທີ່ມີຄວາມສະໝັກໃຈເຂົ້າຮ່ວມເຮັດການສາທິດກິດຈະກຳ ດ້ວຍຕົນເອງ.
- ✍ການກຳນົດກິດຈະກຳ ທີ່ຈະເຮັດສາທິດ ແມ່ນໄດ້ຖືກຄັດເລືອກໂດຍຊາວກະສິກອນເອງ ຫຼື ເປັນກິດຈະກຳ ທີ່ເຄີຍເຮັດຜ່ານມາແລ້ວ.

# ຂັ້ນຕອນທີ 3: ຝຶກອົບຮົມທາງດ້ານເຕັກນິກວິຊາການ



- ຝຶກອົບຮົມ, ແນະນຳຄອບຄົວຊາວກະສິກອນຢູ່ໃນບ້ານເປົ້າໝາຍ ກ່ຽວກັບວິທີການຈັດຕັ້ງປະຕິບັດ ກິດຈະກຳການສາທິດເຕັກນິກ ໃຫ້ແກ່ຄອບຄົວເປົ້າໝາຍ.
- ແຈກຢາຍປື້ມຄູ່ມືຕ່າງໆ ກ່ຽວກັບເຕັກນິກການປູກພືດ, ການລ້ຽງສັດ ເພື່ອເປັນບ່ອນອີງ ໃຫ້ແກ່ຊາວກະສິກອນ ໃນການເຮັດກິດຈະກຳສາທິດເຕັກນິກທາງເລືອກທີ່ເໝາະສົມ.
- ວາງແຜນການຈັດຕັ້ງປະຕິບັດກິດຈະກຳການສາທິດເຕັກນິກ ທາງເລືອກທີ່ເໝາະສົມ ຮ່ວມກັບຊາວກະສິກອນ.

# ຂັ້ນຕອນທີ 4: ການກະກຽມ ແລະ ສະໜອງວັດຖຸອຸປະກອນ

- ✍ ລົງແນະນຳ-ນຳພາ ຄອບຄົວຊາວກະສິກອນເປົ້າໝາຍ ຄັດເລືອກສະຖານທີ່ ແລະ ວັດແທກເນື້ອທີ່ແປງສາທິດ.
- ✍ ຄິດໄລ່ ແລະ ຈັດຊື້ ປັດໃຈນຳເຂົ້າກະສິກຳ ແລະ ອຸປະກອນທີ່ຈຳເປັນ ສຳລັບການເຮັດສາທິດ ແຕ່ລະເຕັກນິກ.
- ✍ ສະໜອງປັດໃຈນຳເຂົ້າກະສິກຳ ແລະ ອຸປະກອນໃຫ້ແກ່ຄອບຄົວເປົ້າໝາຍ ຕາມແຜນການທີ່ວາງໄວ້.

# ຂັ້ນຕອນທີ 5: ການຕິດຕາມ ໃຫ້ຄຳແນະນຳ ທາງດ້ານວິຊາການ

- ✍ ລົງແນະນຳຢູ່ໃນພື້ນທີ່ ຫຼື ຈຸດທີ່ເຮັດການສາທິດ ເຊັ່ນ: ແນະນຳການຄັດເລືອກຕາຝຸ່ນ, ແນະນຳການປ້ອງກັນແມງໄມ້, ການປ້ອງກັນພະຍາດພືດ ແລະ ສັດ.
- ✍ ລົງກວດກາ ແລະ ສັງເກດເບິ່ງແປງສາທິດ.
- ✍ ແນະນຳການບັນທຶກຂໍ້ມູນ ກ່ຽວກັບ ການເຮັດສາທິດຂອງຊາວກະສິກອນ ໃສ່ໃນຕາຕະລາງເກັບກຳຂໍ້ມູນ ຫຼື ປື້ມບັນທຶກ.

# ຂັ້ນຕອນທີ 6: ການສະຫຼູບ ຕີລາຄາ ຖອດຖອນ ບົດຮຽນ ແລະ ປະເມີນຜົນກິດຈະກຳ ຮ່ວມກັບຊາວກະສິກອນ

- ✍ ປະເມີນຜົນໄດ້ຮັບຂອງແຕ່ລະເຕັກນິກ ຕໍ່ກັບ ການຫຼຸດຜ່ອນຄວາມສ່ຽງທາງດ້ານໄພພິບັດ ເຊັ່ນ: ແນວພັນ, ການຈັດການ ແລະ ອື່ນໆ.
- ✍ ປະເມີນຜົນໄດ້ຮັບທາງດ້ານເສດຖະກິດ.
- ✍ ປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ.
- ✍ ປະເມີນທັດສະນະຄະຕິຂອງຊາວກະສິກອນ ຕໍ່ກັບ ເຕັກນິກທາງເລືອກທີ່ເໝາະສົມ.

# ການຫຼຸດຜ່ອນຄວາມສ່ຽງໄພພິບັດ ທາງດ້ານການລ້ຽງສັດ

- ✍ ໃນເຂດທີ່ມັກມີນ້ຳຖ້ວມ ແມ່ນໄດ້ແນະນຳໃຫ້ເຮັດຄອກສັດຢູ່ບ່ອນໂນນ ຫ່າງຈາກແຫຼ່ງນ້ຳໄຫຼແຮງ, ເຮັດຄອກແບບຍົກພື້ນ ສູງ 1 – 1.5 ແມັດ ຫຼື ສູງກວ່າລະດັບນ້ຳຖ້ວມ ແຕ່ລະປີ.
- ✍ ສະຖານທີ່ລ້ຽງສັດ ຄວນເປັນບ່ອນທີ່ສາມາດເຂົ້າເຖິງໄດ້ງ່າຍ ແລະ ມີບ່ອນຍົກຍ້າຍສັດໄວ້ບ່ອນສູງ ໃນເວລາເກີດມີໄພນ້ຳຖ້ວມ.
- ✍ ໜອງປາ ຄວນຄັດເລືອກບ່ອນທີ່ນ້ຳບໍ່ຖ້ວມສູງຫຼາຍ, ເຮັດຄັນຄູໜອງໃຫ້ແໜ້ນໜາ, ສູງກວ່າລະດັບນ້ຳຖ້ວມ ຫຼື ກັນດ້ວຍຕາໜ່າງໃຫ້ສູງ.
- ✍ ໃນເຂດແຫ້ງແລ້ງ ແມ່ນແນະນຳໃຫ້ເຮັດຄອກສັດຢູ່ໃກ້ກັບແຫຼ່ງນ້ຳ ເຊັ່ນ: ເຮັດຢູ່ໃກ້ໜອງປາ, ຢູ່ໃນສວນທີ່ມີຮົ່ມ. ສາມາດເຮັດຄອກຊື່ພື້ນດິນ ຫຼື ເຮັດແບບຍົກພື້ນສູງ ເຊິ່ງຂຶ້ນກັບເງື່ອນໄຂ ຂອງແຕ່ລະຄອບຄົວ.
- ✍ ນຳໃຊ້ແນວພັນ ທີ່ມີຄວາມທົນທານຕໍ່ກັບສະພາບການປ່ຽນແປງຂອງດິນຟ້າອາກາດ ແລະ ທົນທານຕໍ່ພະຍາດ ທີ່ມັກເກີດຂຶ້ນໃນຊ່ວງທີ່ເກີດມີໄພພິບັດ ຫຼື ຫຼັງເກີດໄພພິບັດ.
- ✍ ປູກພືດອາຫານສັດ ທີ່ມີຄວາມທົນທານ ແລະ ເໝາະສົມ ໃນເຂດທີ່ມີນ້ຳຖ້ວມ ຫຼື ແຫ້ງແລ້ງ ແລະ ເກັບຮັກສາອາຫານສັດໄວ້ໃຫ້ສັດກິນ ໃນເວລາເກີດມີໄພພິບັດ.
- ✍ ມີຢາປ້ອງກັນ ແລະ ຢາປົວພະຍາດສັດ.


ຂອບໃຈ
!